ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2552 /ອຄ.ຄພນ

ນະຄອນຫຼວງວຽງຈັນ,ວັນທີ 14 ທັນວາ 2012

ຂໍ້ຕົກລົງ

ວ່າດ້ວຍອົງການປະຕິບັດວຽກງານກວດກາການຄ້າ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມ ດຳລັດວ່າດ້ວຍການກວດກາການຄ້າ, ສະບັບເລກທີ 508/ລບ, ລົງວັນທີ 4 ທັນວາ 2012.

ເພື່ອຜັນຂະຫຍາຍດຳລັດວ່າດ້ວຍການກວດກາການຄ້າ ເຂົ້າໃນພາກປະຕິບັດ ໃຫ້ປະກົດຜົນເປັນຈິງ,

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

ໝວດທີ 1
ຫຼັກການທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດ ຫຼັກການ, ລະບຽບການ, ການຈັດຕັ້ງ, ການເຄື່ອນໄຫວ, ພາລະບົດບາດ, ສິດ, ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ແລະພາກສ່ວນຊ່ວຍວຽກ ແນໃສ່ເຮັດໃຫ້ ອົງການປະຕິບັດວຽກງານກວດກາການຄ້າ ແລະພາກສ່ວນຊ່ວຍວຽກ ທຸກຂັ້ນຮັບຮູ້ ແລະຈຳແນກໄດ້ພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃຫ້ຖືກຕ້ອງ ແລະສອດຄ່ອງກັບເນື້ອໃນຈິດໃຈ ຂອງດຳລັດວ່າດ້ວຍການກວດກາການຄ້າ.

ມາດຕາ 2. ອົງການປະຕິບັດວຽກງານກວດກາການຄ້າ

ອົງການປະຕິບັດວຽກງານກວດກາການຄ້າ ແມ່ນອົງການລັດທີ່ມີ ສິດອຳນາດໃນການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ເພື່ອສ້າງສະຕິ ແລະປູກຈິດສຳນຶກໃນການເຄົາລົບລະບຽບກົດໝາຍ ພ້ອມທັງສະ

ກັດກັ້ນການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ແນໃສ່ສົ່ງເສີມ ແລະປົກປ້ອງ ທົວໜ່ວຍທຸລະກິດການຄ້າທີ່ເຄື່ອນໄຫວຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍ ແລະເປັນໄປຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ, ສົ່ງເສີມການຜະລິດສິນຄ້າ, ທັງເປັນການປະກອບສ່ວນເຂົ້າໃນວຽກງານການຄຸ້ມຄອງສິນຄ້າ, ລາຄາ ແລະປົກ ປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້.

ມາດຕາ 3. ລະບົບການຈັດຕັ້ງ ຂອງອົງການປະຕິບັດວຽກງານກວດກາການຄ້າ

ອົງການປະຕິບັດວຽກງານກວດກາການຄ້າປະກອບມີ 3 ຂັ້ນ ແລະແຕ່ລະຂັ້ນມີພາກສ່ວນຊ່ວຍວຽກດັ່ງນີ້:

ຂັ້ນສູນກາງແມ່ນ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີພະແນກກວດກາການຄ້າ ເປັນຜູ້ຊ່ວຍວຽກ;

ຂັ້ນແຂວງແມ່ນ ຂະແໜງການຄ້າພາຍໃນ, ພະແນກອຸດສາຫະກຳ ແລະ ການຄ້າ ໂດຍມີໜ່ວຍງານກວດກາການຄ້າຊ່ວຍວຽກ;

ຂັ້ນເມືອງແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໂດຍມີຈຸງານກວດກາການຄ້າ ຫຼືພະນັກງານທີ່ເຮັດໜ້າທີ່ຄຸ້ມຄອງການຄ້າພາຍໃນ ເປັນຜູ້ຊ່ວຍວຽກ.

ໝວດ 2
ພາລະບົດບາດ, ສິດ, ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ

ມາດຕາ 4. ພາລະບົດບາດຂອງອົງການປະຕິບັດວຽກງານກວດກາການຄ້າ

ອົງການປະຕິບັດວຽກງານກວດກາການຄ້າ ມີພາລະບົດບາດເປັນເສນາທິການໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການກວດກາການລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດ ທີ່ບໍ່ມີໃບທະບຽນວິສາຫະກິດ ແລະ ການຄ້າ ສິນຄ້ານອກລະບົບທຸກຮູບແບບ ໃນຂອບເຂດທົ່ວປະເທດ.

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ (ກົມການຄ້າພາຍໃນ) ເປັນເສນາທິການໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າໃນຂອບ ເຂດທົ່ວປະເທດ.

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ ເປັນເສນາທິການໃຫ້ ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ໃນການປະຕິບັດວຽກງານກວດກາການຄ້າ ແລະ ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດ ວຽກງານກວດກາການຄ້າ ຂັ້ນເມືອງ ໃນຂອບເຂດແຂວງຕົນເອງ.

ອົງການປະຕິບັດວຽກງານກວດກາການຄ້າຂັ້ນເມືອງ ເປັນເສນາທິການໃຫ້ ອຳນາດການປົກຄອງເມືອງ ແລະພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນການປະຕິບັດວຽກງານກວດກາການຄ້າໃນຂອບເຂດເມືອງຂອງຕົນ.

ມາດຕາ 5. ສິດ ແລະ ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນສູນກາງ ມີສິດ ແລະໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະປັບປຸງ ນິຕິກຳ, ແຜນການ, ໂຄງການ, ແລະວາງມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດການການຄ້າ;
2. ຊີ້ນຳ,ນຳພາ,ຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດ ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
3. ປະສານສົມທົບກັບຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ຂອງອົງການປະຕິບັດວຽກງານກວດກາການຄ້າ ໃນແຕ່ລະຂັ້ນ.
4. ເຜີຍແຜ່ ແລະແນະນຳການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍການກວດກາການຄ້າ ແລະລະບຽບການອື່ນໆທີ່ກ່ຽວຂ້ອງໃຫ້ທົ່ວສັງຄົມຮັບຊາບຢ່າງທົ່ວເຖິງ;
5. ຊອກຮູ້, ສືບຫາ ແລະສ້າງເຄືອຂ່າຍແຫຼ່ງຂ່າວ ກ່ຽວກັບການເຄື່ອນໄຫວທຸລະກິດ ທີ່ລະເມີດລະບຽບ ກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ;
6. ສະຫຼຸບ, ລາຍງານ ແລະສະເໜີ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນແຕ່ລະໄລຍະຕໍ່ຂັ້ນເທິງ ຢ່າງເປັນປະຈຳ;
7. ຄຸ້ມຄອງການນຳໃຊ້ ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ;
8. ສະເໜີ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າ ເພື່ອດຳເນີນການກວດກາການຄ້າ; ✓
9. ຄຸ້ມຄອງເອກະສານ, ຫລັກຖານ ຫລື ຂອງກາງທີ່ຍຶດ ຫລື ອາຍັດໄວ້;
10. ກວດສອບຄວາມຖືກຕ້ອງໃນການດຳເນີນການກວດກາ ຂອງເຈົ້າໜ້າທີ່ກວດກາການຄ້າໃນແຕ່ລະຄັ້ງກ່ອນລາຍງານໃຫ້ຜູ້ມອບໝາຍ ຫລື ຜູ້ແຕ່ງຕັ້ງພິຈາລະນາ;
11. ຮັບ, ພິຈາລະນາ ແລະແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳອັນເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ກວດກາການຄ້າ ໃນກໍລະນີທີ່ອົງການປະຕິບັດວຽກງານກວດກາການຄ້າຂັ້ນແຂວງບໍ່ສາມາດແກ້ໄຂໄດ້;
12. ຈັດຕັ້ງປະຕິບັດມາດຕະການແກ້ໄຂ ແລະຍົກເລີກການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດວ່າດ້ວຍ ການກວດກາການຄ້າ;
13. ເຂົ້າຮ່ວມໃນຄະນະຮັບຜິດຊອບແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງດຳລັດວ່າດ້ວຍການກວດກາການຄ້າ;
14. ສະເໜີ ຂັ້ນເທິງ ຫຼືປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29, 30,31 ແລະ 32 ຂອງດຳລັດວ່າດ້ວຍການກວດກາການຄ້າ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ຫຼືຕາມທີ່ໄດ້ກຳນົດໄວ້ໃນ ລະບຽບກົດໝາຍ.

ມາດຕາ 6. ສິດ ແລະ ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດນິຕິກຳ, ສ້າງແຜນການ, ໂຄງການ, ແລະວາງມາດຕະການຕ່າງໆ ໃນການຈັດ ຕັ້ງປະຕິບັດ ວຽກງານກວດການການຄ້າ ໃນຂອບເຂດແຂວງ ຫລືທ້ອງຖິ່ນທີ່ຢູ່ໃນຄວາມຮັບຜິດ ຊອບຕົນ;
2. ຊີ້ນຳ, ນຳພາ, ຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດ ຂອງອົງການວຽກງານກວດກາການຄ້າຂັ້ນ ເມືອງ ໃນຂອບເຂດແຂວງຂອງຕົນ;
3. ປະສານສົມທົບກັບຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃນການອຳນວຍຄວາມສະ ດວກໃຫ້ແກ່ການເຄື່ອນໄຫວ ຂອງອົງການປະຕິບັດວຽກງານກວດກາການຄ້າ ໃນທ້ອງຖິ່ນຕົນ, ເພື່ອໃຫ້ ວຽກງານກວດກາການຄ້າມີຄວາມສັກສິດ ແລະ ປະສິບຜົນສຳເລັດດີ;
4. ເຜີຍແຜ່ ແລະແນະນຳ ການຈັດຕັ້ງປະຕິບັດດຳລັດວ່າດ້ວຍການກວດກາການຄ້າ ແລະ ລະ ບຽບການອື່ນໆ ທີ່ກ່ຽວຂ້ອງໃຫ້ທົ່ວສັງຄົມ ຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ ຂອງຕົນ;
5. ຊອກຮູ້, ສືບຫາ ແລະສ້າງເຄືອຂ່າຍແຫຼ່ງຂ່າວ ກ່ຽວກັບການເຄື່ອນໄຫວທຸລະກິດ ທີ່ລະເມີດລະບຽບ ກົດ ໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການ ຄ້າສິນຄ້ານອກລະບົບ ເພື່ອດຳເນີນການກວດກາຢ່າງທັນເວລາ ແລະ ທັນສະພາບການ;
6. ສະຫຼຸບ, ລາຍງານ ແລະສະເໜີ ຂໍທິດຊີ້ນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນທ້ອງ ຖິ່ນຕົນ ນຳອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະກະຊວງອຸດສາຫະກຳ ແລະ ການຄ້າເປັນ ປະຈຳ ເພື່ອເຮັດໃຫ້ວຽກງານກວດກາການຄ້າ ຖືກຈັດຕັ້ງປະຕິບັດຢ່າງເປັນ ເນື່ອງ ແລະສອດຄ່ອງ;
7. ຄຸ້ມຄອງ ການນຳໃຊ້ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະ ອຸປະກອນ ຮັບໃຊ້ທີ່ຈຳເປັນ;
8. ສະເໜີ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າ ເພື່ອດຳເນີນການກວດກາການຄ້າ;
9. ຄຸ້ມຄອງເອກະສານ, ຫລັກຖານ ຫລື ຂອງກາງທີ່ຍຶດ ຫລື ອາຍັດໄວ້;
10. ກວດສອບຄວາມຖືກຕ້ອງໃນການດຳເນີນການກວດກາຂອງເຈົ້າໜ້າທີ່ກວດກາການຄ້າ ໃນແຕ່ລະຄັ້ງກ່ອນ ລາຍງານໃຫ້ຜູ້ມອບໝາຍ ຫລື ຜູ້ແຕ່ງຕັ້ງພິຈາລະນາ;
11. ຈັດຕັ້ງປະຕິບັດມາດຕະການແກ້ໄຂ ແລະ ຍົກເລີກການກວດກາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງ ດຳລັດວ່າດ້ວຍ ການກວດກາການຄ້າ;
12. ເຂົ້າຮ່ວມໃນຄະນະຮັບຜິດຊອບແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງດຳລັດວ່າດ້ວຍ ການກວດ ກາການຄ້າ;
13. ຮັບ, ພິຈາລະນາ ແລະແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳອັນເນື່ອງມາຈາກການ ກະທຳທີ່ບໍ່ ຖືກຕ້ອງ ຂອງເຈົ້າໜ້າທີ່ກວດກາການຄ້າ, ໃນກໍລະນີທີ່ອົງການປະຕິບັດວຽກງານ ກວດກາການຄ້າຂັ້ນ ເມືອງບໍ່ສາມາດແກ້ໄຂໄດ້;
14. ສະເໜີຂັ້ນເທິງ ຫຼືປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການ ຕໍ່ຜູ້ລະເມີດຕາມ ທີ່ໄດ້ ກຳນົດໄວ້ ໃນມາດຕາ 29, 30,31 ແລະ32 ຂອງດຳລັດວ່າດ້ວຍການ ກວດກາການຄ້າ ຢ່າງ ເຂັ້ມງວດ;

15. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂັ້ນເທິງ ຫລື ຕາມທີ່ໄດ້ກຳນົດໄວ້ ຕາມລະບຽບກົດໝາຍ.

ມາດຕາ 7. ສິດ ແລະ ໜ້າທີ່ ຂອງອົງການປະຕິບັດວຽກງານກວດກາການຄ້າ ຂັ້ນເມືອງ

ອົງການປະຕິບັດວຽກງານກວດກາການຄ້າ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດນິຕິກຳ, ສ້າງແຜນການ, ໂຄງການ, ແລະວາງມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດການການຄ້າ ໃນຂອບເຂດເມືອງ ຫລື ທ້ອງຖິ່ນທີ່ຢູ່ໃນຄວາມຮັບຜິດ ຊອບຕົນ;
2. ຕິດຕາມ ແລະກວດກາ ການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງ ຂອງຕົນ;
3. ປະສານສົມທົບກັບຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ຂອງອົງການປະຕິບັດວຽກງານກວດກາການຄ້າ ໃນຂອບເຂດເມືອງ ຂອງຕົນ, ເພື່ອໃຫ້ວຽກງານກວດກາການຄ້າມີຄວາມສັກສິດ ແລະ ປະສິບຜົນ ສຳເລັດດີ;
4. ເຜີຍແຜ່ ແລະແນະນຳ ການຈັດຕັ້ງປະຕິບັດດຳລັດວ່າດ້ວຍການກວດກາການຄ້າ ແລະ ລະບຽບ ການອື່ນໆທີ່ກ່ຽວຂ້ອງໃຫ້ທົ່ວສັງຄົມ ຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ ຂອງຕົນ;
5. ຊອກຮູ້, ສືບຫາ ແລະສ້າງເຄືອຂ່າຍແຫຼ່ງຂ່າວ ກ່ຽວກັບການເຄື່ອນໄຫວທຸລະກິດ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ເພື່ອດຳເນີນການກວດກາຢ່າງທັນເວລາ ແລະ ສະພາບການ;
6. ສະຫຼຸບ, ລາຍງານ ແລະສະເໜີ ຂໍ້ທັດຊີ້ນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານກວດກາການຄ້າ ໃນທ້ອງຖິ່ນຕົນ ນຳອຳນາດການປົກຄອງເມືອງ, ເທດສະບານ ແລະພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນປະຈຳ ເພື່ອເຮັດໃຫ້ວຽກງານກວດກາການຄ້າ ຖືກຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ສອດຄ່ອງ;
7. ຄຸ້ມຄອງ ການນຳໃຊ້ ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ກວດກາການຄ້າ, ພາຫະນະ ແລະອຸປະກອນຮັບໃຊ້ທີ່ຈຳເປັນ;
8. ສະເໜີແຕ່ງຕັ້ງເຈົ້າໜ້າທີ່ກວດກາການຄ້າ ເພື່ອດຳເນີນການກວດກາການຄ້າ;
9. ຄຸ້ມຄອງເອກະສານ, ຫລັກຖານ ຫລື ຂອງກາງທີ່ຍຶດ ຫລື ອາຍັດໄວ້;
10. ກວດສອບຄວາມຖືກຕ້ອງໃນການດຳເນີນການກວດກາ ຂອງເຈົ້າໜ້າທີ່ກວດກາການຄ້າໃນແຕ່ລະຄັ້ງກ່ອນລາຍງານໃຫ້ຜູ້ມອບໝາຍ ຫລື ຜູ້ແຕ່ງຕັ້ງພິຈາລະນາ;
11. ຈັດຕັ້ງປະຕິບັດມາດຕະການແກ້ໄຂ ແລະ ຍົກເລີກການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດວ່າດ້ວຍ ການກວດກາການຄ້າ;
12. ເຂົ້າຮ່ວມໃນຄະນະຮັບຜິດຊອບແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງດຳລັດວ່າດ້ວຍການກວດກາການຄ້າ;
13. ຮັບ, ພິຈາລະນາ ແລະແກ້ໄຂ ຄຳສະເໜີ ຂອງຜູ້ທີ່ໄດ້ຮັບຄວາມບໍ່ເປັນທຳອັນເນື່ອງມາຈາກ ການກະທຳທີ່ບໍ່ຖືກຕ້ອງ ຂອງເຈົ້າໜ້າທີ່ກວດກາການຄ້າ ຂັ້ນເມືອງ;

14. ສະເໜີຂັ້ນເທິງ ຫຼືປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດຕາມທີ່ ໄດ້ກໍານົດໄວ້ໃນ ມາດຕາ 29, 30,31 ແລະ32 ຂອງດໍາລັດວ່າ ດ້ວຍການກວດກາການຄ້າ ຢ່າງເຂັ້ມງວດ;
15. ນໍາໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂັ້ນເທິງ ຫລື ຕາມທີ່ໄດ້ກໍານົດໄວ້ຕາມລະບຽບ ກົດໝາຍ.

ໝວດ 3
ພາລະບົດບາດ, ສິດ ແລະໜ້າທີ່ ຂອງພາກສ່ວນຊ່ວຍວຽກ

ມາດຕາ 8. ພາລະບົດບາດ

ພາກສ່ວນຊ່ວຍວຽກ ຂອງອົງການປະຕິບັດວຽກງານກວດກາການຄ້າແຕ່ລະຂັ້ນ ມີພາລະບົດບາດ ເປັນຜູ້ຊ່ວຍ ອົງການປະຕິບັດວຽກງານກວດກາການຄ້າ ທາງດ້ານລະບຽບກົດໝາຍ ແລະວິຊາການດ້ານ ວຽກງານກວດກາການຄ້າ.

ມາດຕາ 9. ສິດ ແລະໜ້າທີ່ຂອງພາກສ່ວນຊ່ວຍວຽກ

ສິດ ແລະໜ້າທີ່ຂອງ ພາກສ່ວນຊ່ວຍວຽກແຕ່ລະຂັ້ນ ແມ່ນຊ່ວຍອົງການປະຕິບັດ ວຽກງານກວດກາ ການຄ້າ ຂັ້ນຂອງຕົນ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະໜ້າທີ່ ທີ່ກ່ຽວຂ້ອງຂອງອົງການດັ່ງ ກ່າວ, ຕາມທີ່ໄດ້ກໍານົດໄວ້ໃນພາລະບົດບາດ, ສິດ ແລະໜ້າທີ່ ຂອງອົງການຈັດຕັ້ງປະຕິບັດວຽກງານ ກວດ ກາການຄ້າ ແຕ່ລະຂັ້ນ.

ໝວດທີ 4
ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

ມາດຕາ 10. ນະໂຍບາຍ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກ ງານກວດກາການຄ້າຈະໄດ້ຮັບການປະຕິບັດນະໂຍບາຍ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍການກວດກາ ການຄ້າ.

ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ຫາກໄດ້ລະເມີດດໍາລັດວ່າດ້ວຍການກວດກາການຄ້າ ແລະຂໍ້ ຕົກລົງ ສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປັບໃໝ ຫຼື ລົງໂທດຕາມທີ່ໄດ້ກໍານົດໄວ້ ໃນດໍາ ລັດວ່າດ້ວຍການກວດກາການຄ້າ ແລະລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 12. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ ລະເມີດລະບຽບການຄຸ້ມຄອງການຄ້າ, ດໍາເນີນທຸລະກິດ ທີ່ບໍ່ມີໃບທະບຽນວິສາຫະກິດ ແລະການຄ້າສິນຄ້ານອກລະບົບ ທີ່ມີລັກສະນະເບົາບາງ ແລະບໍ່ເປັນການ ກະທໍາຜິດທາງອາຍາ ຈະຖືກປັບໃໝ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງດັ່ງນີ້:

1. <u>ການຄ້າສິນຄ້າ ແລະລາຄາ ທີ່ລະເມີດລະບຽບການຄຸ້ມຄອງການຄ້າຈະຖືກປັບໃໝ ແຕ່ລະກໍລະນີດັ່ງນີ້:</u>

1.1 ບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ ຄັ້ງ/ລາຍການ;

1.2 ແຈ້ງຂໍ້ມູນເທັດ ກ່ຽວກັບໂຄງປະກອບລາຄາ ຫຼືຄັງແຮສໍາຮອງມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

1.3 ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ ລາຍການ;

1.4 ນໍາເອົາສິນຄ້າທີ່ມີໄວ້ໃນຄັງແຮສໍາຮອງອອກຈໍາໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການ ຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;

1.5 ຢຸດ, ປະຕິເສດ ຫຼືແກ່ຍາວເວລາ ການຈໍາໜ່າຍ ຫຼື ການບໍລິການ ໂດຍ ບໍ່ມີເຫດຜົນໃນ ເມື່ອມີຄໍາສັ່ງຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ /ລາຍການ;

1.6 ນໍາໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝ ແຕ່ 1.000.000 ກີບຫາ 5.000.000 ກີບ/ຄັ້ງ/ລາຍການ.

(ຂໍ້ 1.1-1.6 ແມ່ນອີງຕາມມາດຕາ 26 ດໍາລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະຄ່າບໍລິການ, ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010)

1.7 ການໂຄສະນາສິນຄ້າທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງເຊັ່ນ: ບໍ່ຖືກກັບປະເພດ, ຊະນິດສິນຄ້າ, ຄຸນລັກສະນະ, ຄຸນນະພາບ, ມາດຕະຖານຂອງສິນຄ້າ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ ແລ້ວແຕ່ລະ ກໍລະນີພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ຫຼື ທໍາລາຍຖິ້ມ.

(ກົດໝາຍ ວ່າດ້ວຍ ມາດຕະຖານ ມາດຕາ 104 ແລະ ມາດຕາ 14 ຂໍ້ກໍານົດຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍການຄຸ້ມຄອງການໂຄສະນາອາຫານ, ຢາ ແລະ ຜະລິດຕະພັນການແພດ ເລກທີ 2581/ກຊສ, ລົງວັນທີ 12 ພະຈິກ 2003);

1.8 ການໂຄສະນາສິນຄ້າມີລັກສະນະສຽດສີ ແລະ ໃສ່ຮ້າຍປ້າຍສີ ສິນຄ້າ ແລະ ການບໍລິການ ຂອງຜູ້ອື່ນ ຈະ ຖືກປັບໃໝ ແຕ່ 50.000 ກີບ ຫາ 300.000 ກີບ ໃນກໍລະນີດັ່ງກ່າວນີ້ຖ້າຫາກ ມີຝ່າຍໃດໜຶ່ງ ມາສະເໜີ ຫຼື ຮ້ອງຂໍຈຶ່ງຈະດໍາເນີນ ແລະ ກວດກາ (ກົດໝາຍອາຍາ ມາດຕາ 94);

1.9 ບໍ່ຕິດສະຫຼາກ, ຕິດສະຫຼາກສິນຄ້າ ບໍ່ຖືກຕ້ອງ ແລະບໍ່ມີສະຫຼາກເປັນພາສາລາວໂດຍສະເພາະສິນຄ້າ ທີ່ມີຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະຄວາມປອດໄພຂອງຜູ້ຊົມໃຊ້ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ/ຄັ້ງ ຫຼື ອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ (ກົດໝາຍມາດຕະຖານ ມາດຕາ 104);

1.10 ປອມແປງສະຫຼາກ, ຜະລິດ ຫຼື ນໍາໃຊ້ສະຫຼາກປອມ ກ່ຽວກັບປະເພດ ສິນຄ້າ ຈະຖືກປັບໃໝ ແຕ່

200.000 ກີບ ຫາ 2.000.000 ກີບ/ຄັ້ງ/ລາຍການ, ພ້ອມທັງອາຍັດ ຫຼື ຍຶດສິນຄ້າດັ່ງກ່າວ ແລະ ຈະຖືກດຳເນີນ ຄະດີຕາມກົດໝາຍອາຍາ (ກົດໝາຍ ອາຍາ ມາດຕາ 161);

1.11 ຜະລິດ, ນຳເຂົ້າ, ຈຳໜ່າຍສິນຄ້າທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ ຈະຖືກປັບໃໝແຕ່ 500.000 ກີບ ຫາ 5.000.000 ກີບ (ກົດໝາຍວ່າດ້ວຍ ມາດຕະຖານ ມາດຕາ 104 ແລະ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ມາດຕາ 134);

1.12 ປອມແປງເອກະສານ ຫຼື ໃຊ້ເອກະສານປອມກ່ຽວກັບສິນຄ້າ ແລະການບໍລິການ ຈະຖືກປັບໃໝ ແຕ່ 200.000 ກີບ ຫາ 2.000.000 ກີບ (ກົດໝາຍອາຍາ ມາດຕາ 161) ແລະ ຈະຖືກດຳ ເນີນຄະດີຕາມລະບຽບກົດໝາຍ;

1.13 ຕິດ, ປະກາດລາຄາ ແລະຮັບຊຳລະຄ່າສິນຄ້າ ແລະການບໍລິການເປັນເງິນຕາຕ່າງປະເທດ ຈະຖືກປັບໃໝ 500.000 ກີບ ຫຼື 50% ຂອງມູນຄ່າທີ່ລະເມີດ. ໃນກໍລະນີທີ່ໄດ້ປັບໃໝແລ້ວ ແຕ່ຍັງບໍ່ເຂັດຫລາບ ແລະ ຍັງສືບຕໍ່ລະເມີດ ຜູ້ລະເມີດຈະຖືກປັບໃໝ100% ຂອງມູນຄ່າທີ່ລະເມີດ ແລະ ຈຳນວນເງິນ ຫຼືວັດຖຸມີຄ່າທີ່ນຳໃຊ້ເຂົ້າໃນການລະເມີດຈະຖືກຮິບເຂົ້າງົບປະມານຂອງລັດ, ຜູ້ລະເມີດຖ້າຫາກເປັນບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນທຸລະກິດຍັງຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ (ລັດຖະບັນຍັດເລກທີ 01/ປສລ, ລົງວັນທີ 9 ສິງຫາ 2002 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ມາດຕາ 37ແລະ ບົດແນະນຳ ຂອງທະນາຄານແຫ່ງ ສປປ ລາວ, ເລກທີ 01/ທຫລ, ລົງວັນທີ 2 ເມສາ 2010 ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະບັນຍາ ເລກທີ 01/ປສລ, ລົງວັນທີ 9 ສິງຫາ 2002);

1.14 ລັກໂລບການຊັ່ງ, ການຜອງ, ການວັດແທກ ໂດຍນຳໄຊ້ຊັ່ງ, ເຄື່ອງຜອງ, ເຄື່ອງວັດແທກດັດແປງເພື່ອເອົານ້ຳໜັກ, ບໍລິມາດ, ປະລິມານ ຂອງສິນຄ້າ ຫຼື ເງິນ ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 3.000.000 ກີບ (ກົດໝາຍອາຍາ ມາດຕາ 150);

1.15 ຂາຍ ຫຼື ສະໜອງອາຫານໃຫ້ແກ່ສັງຄົມ ທີ່ບໍ່ມີຄວາມປອດໄພ, ບໍ່ໄດ້ມາດຕະຖານ, ເຈືອປົນ, ປົນເປື້ອນ ຫຼື ໝົດອາຍຸການບໍລິໂພກ ຈະຖືກອາຍັດ ຫຼື ຍຶດ ແລະ ປັບໃໝຕາມມູນຄ່າຂອງສິນຄ້າ ແລະ ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ບໍ່ອະນຸຍາດໃຫ້ຜະລິດ, ນຳເຂົ້າ ແລະ ຈໍລະຈອນຈຳໜ່າຍ ຜະລິດຕະພັນນັ້ນ.

(ມາດຕາ 50 ກົດໝາຍອາຫານ ແລະ ຢາ ມາດຕາ 9 ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງສາທາລະນະສຸກ ວ່າດ້ວຍສະຫຼາກຂອງຜະລິດຕະພັນອາຫານ ທີ່ບັນຈຸໃນເຄື່ອງຫຸ້ມຫໍ່ ເລກທີ 519/ກສຊ. 18 ມີນາ 2009).

2. <u>ການດຳເນີນທຸລະກິດທີ່ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ ໃນມາດຕາ236, 237, 240, 241 ແລະ 242 ຂອງກົດໝາຍວ່າດ້ວຍວິສາຫະກິດ, ເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005 ຈະຖືກສຶກສາອົບຮົມ ຫຼື ປັບໃໝ ດັ່ງນີ້:</u>

2.1 ການດຳເນີນທຸລະກິດໂດຍບໍ່ຂຶ້ນ ທະບຽນວິສາຫະກິດ ຈະຖືກປັບໃໝ 1.000.000 ກີບ ຫາ 10.000.000 ກີບ ຕໍ່ຄັ້ງ(ມາດຕາ 236 ກົດໝາຍວ່າດ້ວຍວິສາຫະກິດ);

2.2 ການດຳເນີນທຸລະກິດໂດຍບໍ່ຖືກກັບວັດຖຸປະສົງ ຂອງວິສາຫະກິດຕົນ ຈະຖືກສຶກສາອົບຮົມ ຫຼື ປັບໃໝ 1.000.000 ກີບ ຫາ 5.000.000 ກີບ ຕໍ່ຄັ້ງ(ມາດຕາ 237 ກົດໝາຍວ່າດ້ວຍວິສາຫະ ກິດ);

2.3 ການບໍ່ຕິດປ້າຍ ຫຼືໃສ່ຊື່ວິສາຫະກິດ ທີ່ບໍ່ຖືກຕ້ອງກັບຮູບການ ຫຼື ຮູບແບບວິສາຫະກິດຂອງຕົນຈະຖືກ ສຶກສາອົບຮົມ ຫຼື ປັບໃໝ 200.000 ກີບ ຕໍ່ຄັ້ງ ພາຍຫຼັງໄດ້ແຈ້ງໃຫ້ຊາບແລ້ວເຈັດວັນ (ມາດ ຕາ 240 **ກົດໝາຍວ່າດ້ວຍວິສາຫະກິດ**);

2.4 ການໃສ່ຊື່ທຸລະກິດທີ່ເກືອດຫ້າມ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍວິສາ ຫະກິດ ຈະຖືກສຶກສາອົບຮົມ ຫຼື ປັບໃໝ 300.000 ກີບ ແລະໃຫ້ຢຸດເຊົາການໃຊ້ຊື່ວິສາຫະກິດນັ້ນ (ມາດຕາ **241 ກົດໝາຍວ່າດ້ວຍວິສາຫະກິດ**);

2.5 ການບໍ່ປົດປ້າຍຊື່ວິສາຫະກິດ ພາຍຫຼັງທີ່ວິສາຫະກິດຖືກຍຸບເລີກແລ້ວ ຕາມທີ່ໄດ້ບົ່ງໄວ້ໃນວັກ ໜຶ່ງ ມາດຕາ 26 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກສຶກສາອົບຮົມ ຫຼື ປັບໃໝ 500.000 ກີບ ແລະໃຫ້ປົດປ້າຍອອກ (**ມາດຕາ 242 ກົດໝາຍວ່າດ້ວຍວິສາຫະກິດ**).

3. <u>ການຄ້າສິນຄ້ານອກລະບົບ ຈະຖືກສຶກສາອົບຮົມ ຫຼື ປັບໃໝ:</u>

3.1 ການນຳເອົາສິນຄ້າ ອອກ-ເຂົ້າ ບໍ່ຖືກຕາມດ່ານທີ່ໄດ້ບົ່ງໄວ້ໃນໃບອະນຸຍາດ ແຕ່ໄດ້ເສັຍພະທະ ຕ່າງໆ ຕາມລະບຽບກົດໝາຍຖືກຕ້ອງ ຈະຖືກສຶກສາອົບ ຮົມກ່າວເຕືອນ ແລະປັບໃໝ ດັ່ງນີ້:

- ຕ່ຳກວ່າ 5.000.000 ກີບ ຈະຖືກສຶກສາອົບຮົມ, ກ່າວເຕືອນ;
- ແຕ່ 5.000.001 ກີບ ຫາ 10.000.000 ກີບ ຈະຖືກປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າ ສິນຄ້າ;
- ແຕ່ 10.000.001 ກີບ ຂຶ້ນໄປ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າສິນຄ້າ.

(ມາດຕາ 88 ກົດໝາຍວ່າດ້ວຍພາສີ, ເລກທີ 04/ສພຊ, ລົງວັນ 20 ທັນວາ 2011)

3.2 ການລະເມີດລະບຽບການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກສິນຄ້າ ຕາມທີ່ໄດ້ກຳນົດ ໄວ້ໃນ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເລກທີ 114/ລບ, ລົງວັນທີ 6 ເມສາ 2011 ແລະ ດຳລັດວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ເຊັ່ນ:

- ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການສິນຄ້າເກືອດຫ້າມນຳເຂົ້າ ຫຼື ການສົ່ງອອກ ຍົກເວັ້ນໃນກໍລະນີທີ່ໄດ້ຮັບອະນຸຍາດ ຈາກລັດຖະບານແຫ່ງ ສປປ ລາວ;
- ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງ ອອກ ກ່ອນໄດ້ຮັບອະນຸຍາດ;
- ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຢູ່ໃນລາຍການທີ່ຕ້ອງຜ່ານມາດຕະການສຸອານາໄມ ແລະ ສຸຂານາ ໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ກ່ອນໄດ້ຜ່ານການກວດສອບ ຫຼືການຢັ້ງຢືນມາດຕະ ການສຸອານາໄມ ແລະ ສຸຂານາ ໄມພືດ ຫຼື ລະບຽບການທາງດ້ານເຕັກນິກ;
- ການປອມແປງ, ປ່ຽນແປງ ຫຼື ຊື້-ຂາຍເອກະສານຕ່າງໆ ກ່ຽວກັບການຊື້ຂາຍສິນຄ້າ ເປັນຕົ້ນ: ໃບ ຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການລະເມີດດັ່ງກ່າວມາໃນ ຂໍ້ 3.2 ເທິງນີ້ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າສິນຄ້າ ແລະຕ້ອງປະຕິບັດພັນທະຕ່າງໆ

ໃຫ້ຄົບຖ້ວນ ຕາມລະບຽບກົດໝາຍ.

ຖ້າມີການກະທຳຜິດເປັນຄັ້ງທີ ສອງຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ ແລະຕ້ອງປະຕິບັດພັນທະຕ່າງໆ ໃຫ້ຄົບຖ້ວນຕາມລະບຽບກົດໝາຍ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ທີ່ບໍ່ແມ່ນປະເພດຄວບຄຸມທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນ ການແກ້ໄຂແລ້ວ.(ມາດຕາ 89 ກົດໝາຍວ່າດ້ວຍພາສີ, ເລກທີ 04/ສພຊ, ລົງວັນ 20 ທັນວາ 2011)

3.3 ການຊື້-ຂາຍສິນຄ້າ ທີ່ລັກລອບ ຫຼື ຫຼົບຫຼີກ ລະບຽບການຄຸ້ມຄອງການຄ້າ ເປັນຕົ້ນ: ການລັກລອບນຳເຂົ້າ-ສົ່ງອອກສິນຄ້າ, ການຫຼົບຫຼີກພັນທະ ຫຼື ຄ່າທຳນຽມຕ່າງໆ ຫຼື ປະຕິບັດພັນທະ ຫຼື ຄ່າທຳ ນຽມບໍ່ເຕັມອັດຕາສ່ວນ ຈະຖືກປັບໃໝ ເຈັດສິບສ່ວນຮ້ອຍ (70%) ຂອງມູນຄ່າສິນຄ້າ ເຄື່ອງຂອງ ແລະຕ້ອງ ປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ.

ຖ້າເປັນການກະທຳຜິດຄັ້ງທີສອງ ຈະຖືກປັບໃໝ ຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າເຄື່ອງຂອງ ແລະຕ້ອງປະຕິບັດພັນທະຕ່າງໆ ຢ່າງຄົບຖ້ວນຕາມລະບຽບກົດໝາຍ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ ເພື່ອປິດບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ທີ່ບໍ່ແມ່ນປະເພດຄວບຄຸມທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນເຈົ້າຂອງພາຍຫຼັງດຳເນີນການແກ້ໄຂແລ້ວ. (ມາດຕາ 90 ກົດໝາຍວ່າດ້ວຍພາສີ, ເລກທີ 04/ສພຊ, ລົງວັນ 20 ທັນວາ 2011)

3.4 ການກະທຳຜິດຕາມທີ່ໄດ້ບົ່ງໄວ້ໃນຂໍ້ 3.2 ແລະ 3.3 ຂອງຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະ ເປັນອາຈິນ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າສິນຄ້າ ເຄື່ອງຂອງ. ສ່ວນສິນຄ້າ, ເຄື່ອງຂອງທີ່ຖືກຍຶດ ຫຼື ອາຍັດໄວ້ນັ້ນ ໃຫ້ຕົກເປັນຂອງລັດ.(ມາດຕາ 91 ກົດໝາຍວ່າດ້ວຍພາສີ, ເລກທີ 04/ສພຊ, ລົງວັນ 20 ທັນວາ 2011)

ຖ້າຍັງມີ ການລະເມີດຕື່ມອີກ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ(50%) ຂອງມູນຄ່າສິນຄ້າ, ເຄື່ອງ ຂອງ. ສ່ວນສິນຄ້າ, ເຄື່ອງຂອງ ທີ່ຖືກຍຶດ ຫຼື ອາຍັດໄວ້ນັ້ນ ໃຫ້ຕົກເປັນຂອງລັດ.(ມາດຕາ 92 ກົດໝາຍວ່າດ້ວຍພາສີ, ເລກທີ 04/ສພຊ, ລົງວັນ 20 ທັນວາ 2011)

ສິນຄ້າ, ເຄື່ອງຂອງ ທີ່ຕົກເປັນຂອງລັດ ແມ່ນໃຫ້ສະເໜີຕໍ່ອົງການສານປະສານຊົນ ອອກຂໍ້ຕົກລົງຮິບເປັນຂອງລັດຕາມລະບຽບການແລ້ວ ຈຶ່ງສາມາດ ນຳໄປຂາຍ ຫຼືນຳໃຊ້ ຫຼືທຳລາຍຖິ້ມໄດ້.

4. ການຄ້າ-ຂາຍສິນຄ້າປະເພດໄມ້ ທີ່ຜິດຕໍ່ລະບຽບກົດໝາຍ ເຊັ່ນ: ການຄ້າຂາຍ ສິນຄ້າປະເພດ ໄມ້ຫວງຫ້າມໂດຍບໍ່ໄດ້ ຮັບອະນຸຍາດ, ການຄ້າຂາຍສິນຄ້າປະເພດໄມ້ຕ່າງໆ ທີ່ບໍ່ມີເອກະສານ ຫຼື ເກີນຈຳນວນ, ບໍລິມາດ ໃນເອກະສານ, ການລັກລອບສົ່ງອອກສິນຄ້າປະເພດໄມ້ທ່ອນ, ໄມ້ແປ ຮູບ, ຕໍໄມ້, ປູດໄມ້ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າສິນຄ້າ ຫຼື ວັດຖຸທີ່ລະເມີດ ພ້ອມທັງຮິບ ສ່ວນທີ່ລະເມີດນັ້ນເປັນຂອງລັດ. ການຮິບ ເປັນຂອງລັດຕ້ອງ ປະຕິບັດຕາມກົດໝາຍອາຍາ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ.(ມາດຕາ 71 ກົດໝາຍວ່າດ້ວຍປ່າໄມ້, ເລກທີ 13/ສພຊ, ລົງວັນທີ 9 ພະຈິກ 2005)

5. ການຄ້າຂາຍສິນຄ້າ, ການໃຫ້ບໍລິການ ໂດຍບໍ່ອອກໃບເກັບເງິນ ຫຼືອອກໃບເກັບເງິນ ບໍ່ຖືກຕ້ອງຕາມລະບຽບ ຂອງອາກອນ(ຍົກເວັ້ນກໍລະນີທີ່ບໍ່ຈຳເປັນຕ້ອງອອກໃບບິນເກັບເງິນ) ຈະຖືປັບໃໝ ຊາວສ່ວນຮ້ອຍ (20%) ສຳລັບຄັ້ງທີໜຶ່ງ, ສີ່ສິບສ່ວນຮ້ອຍ(40%) ສຳລັບຄັ້ງທີສອງ, ຫົກສິບສ່ວນຮ້ອຍ(60%) ສຳລັບຄັ້ງທີສາມ ຂອງຈຳນວນ ອາກອນທີ່ໄລ່ໃຫ້ເສຍພ້ອມທັງມອບ ພັນທະອາກອນ ໃຫ້ລັດຢ່າງຄົບຖ້ວນຕາມລະບຽບກົດໝາຍ.**(ມາດຕາ 73, ກົດ ໝາຍວ່າດ້ວຍສ່ວນສາອາກອນ, ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011)**
6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ໂຮງຈັກໂຮງງານ ທີ່ດຳເນີນທຸລະກິດນຳເຂົ້າ, ຜະລິດ, ຈຳໜ່າຍຜະລິດຕະພັນຢາສູບ ແລະ ຜະລິດພັນຄ້າຍຄືຜະລິດຕະພັນຢາສູບ ຢູ່ ສປປ ລາວ ທີ່ບໍ່ຖືກຕ້ອງເຊັ່ນ: ການບໍ່ພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ ຫຼື ພິມບໍ່ຖືກຕາມມາດຖານ ຂອງກະຊວງ ສາທາລະ ນະສຸກ; ການນຳເຂົ້າ, ຜະລິດ ແລະຈຳໜ່າຍ ເຂົ້າໜົມ, ອາຫານ, ເຄື່ອງດື່ມ ແລະອື່ນໆ ທີ່ອອກແບບ ຫຼື ຮູບຊົງຂອງຜະລິດຕະພັນ ຄ້າຍຄືຢາສູບ; ໂຄ ສະນາ ຫຼື ກະທຳການໃດໆ ທີ່ມີລັກສະນະຊັກຊວນ, ຈູງໃຈ ຊຶ່ງເປັນການ ສົ່ງເສີມໃຫ້ເກີດຄວາມສົນໃຈ ແລະ ບໍລິໂພກຢາສູບໃນທຸກຮູບແບບ ຈະຖືກປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດ ເລກທີ 370/ສນຍ, ລົງວັນທີ 23/08/2010 ດັ່ງນີ້ :
   - ຄັ້ງທີ 1 : ກ່າວເຕືອນ, ສຶກສາອົບຮົມໃຫ້ຂຽນໃບປະຕິຍານ.
   - ຄັ້ງທີ 2 : ຍຶດ ຫຼື ຮິບ ແລະ ປັບໃໝ 1 ເທົ່າຕົວຂອງມູນຄ່າຜະລິດຕະພັນດັ່ງກ່າວທີ່ຂາຍ ຫຼື ຈຳໜ່າຍຕາມເຫົ້ອງຕະຫຼາດ ແລະ ສະຖານທີ່ຕ່າງໆ ໂດຍຄິດໄລ່ຕາມຈຳນວນຜະລິດຕະພັນຢາສູບທີ່ກວດພົບຕົວຈິງ ຫຼື ຕາມໃບນຳສົ່ງສິນຄ້າທີ່ທາງການຮັບຮູ້ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ.
   - ຄັ້ງທີ 3 : ຍຶດ ຫຼື ຮິບ ແລະ ປັບໃໝ 3 ເທົ່າຕົວຂອງມູນຄ່າຜະລິດຕະພັນ ທີ່ກ່າວໄວ້ໃນຄັ້ງທີ່ 2 ເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ.
   - ຄັ້ງທີ 4 : ຍຶດ ຫຼື ຮິບ ແລະ ປັບໃໝ 5 ເທົ່າຕົວຂອງມູນຄ່າຜະລິດຕະພັນ ຕາມທີ່ໄດ້ກຳນົດໄວ້ ໃນ ຄັ້ງທີ 2 ເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ, ຖອນໃບອະນຸຍາດແບບຊົ່ວຄາວ ຫຼື ຖາວອນ ຕາມແຕ່ລະກໍລະນີ ໜັກ ຫຼື ເບົາ.
7. ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ດຳເນີນທຸລະກິດ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບການ ຄຸ້ມຄອງການຄ້າ, ການດຳເນີນທຸລະກິດທີ່ບໍ່ມີໃບທະບຽນວິສາຫະກິດ, ການຄ້າສິນຄ້ານອກລະບົບ ທີ່ມີການລະເມີດນອກເໜືອບັນດາການລະເມີດທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2, 3, 4, 5 ແລະ6 ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບ ກົດໝາຍ ທີ່ກ່ຽວຂ້ອງ.

ມາດຕາ 13. ວິທີຄິດໄລ່ຄ່າປັບໃໝ

ການປັບໃໝ ທາງດ້ານບໍລິຫານ ໃຫ້ຄິດໄລຕາມແຕ່ກໍລະນີດັ່ງນີ້ :

- ການລະເມີດລະບຽບການຄຸ້ມຄອງການຄ້າ ທີ່ມີລັກສະນະເບົາບາງທີ່ບໍ່ເປັນການລະເມີດ ທາງອາຍາ, ພາຍຫຼັງທີ່ໄດ້ກ່າວເຕືອນແລ້ວ ຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝ ໃນມູນຄ່າຕໍ່າສຸດທີ່ໄດ້ກໍານົດໄວ້ໃນລະບຽບກົດ ໝາຍ ຍົກເວັ້ນກົດໝາຍໄດ້ກໍານົດເປັນຢ່າງອື່ນ.

- ກໍລະນີ ປັບໃໝແລ້ວ ຍັງສືບຕໍ່ລະເມີດ ແມ່ນໃຫ້ຄິດໄລ່ຄ່າປັບໃໝໃນລະດັບກາງ, ການຄິດໄລ່ແມ່ນໃຫ້ເອົາ ມູນຄ່າປັບໃໝຕໍ່າສຸດ ບວກໃຫ້ມູນຄ່າປັບໃໝສູງສຸດ ແລ້ວຫານສອງ ຍົກເວັ້ນກົດໝາຍ ໄດ້ກໍານົດເປັນຢ່າງອື່ນ.

- ກໍລະນີການລະເມີດນັ້ນມີລັກສະນະໜັກ, ເປັນການລະເມີດຊໍ້າຊ້ອນກັນຫຼາຍເທື່ອ ມີລັກສະນະເປັນອາຈິນ ແມ່ນໃຫ້ຄິດໄລ່ຄ່າປັບໃໝ ໃນມູນຄ່າສູງສຸດ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ຍົກເວັ້ນກົດໝາຍ ໄດ້ກໍານົດເປັນ ຢ່າງອື່ນ.

ຕົວຢ່າງ: ການບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ຄັ້ງ/ລາຍການ.

ກໍລະນີທີໜຶ່ງ: ແມ່ນຄິດໄລ່ 500.000ກີບ/ຄັ້ງ/ລາຍການ, ຖ້າມີສອງລາຍການກໍໃຫ້ຄູນສອງ, ຄ່າປັບໃໝແມ່ນ 500.000ກີບ x 2 = 1.000.000 ກີບ.

ກໍລະນີທີສອງ: ຄ່າປັບໃໝແມ່ນ (500.000 + 1.000.000)/2 = 750.000 ກີບ/ຄັ້ງ/ລາຍການ;

ກໍລະນີທີສາມ: ຄ່າປັບໃໝແມ່ນ 1.000.000ກີບ/ຄັ້ງ/ລາຍການ

ໃນກໍລະນີ ທີ່ຜູ້ລະເມີດ ຫາກບໍ່ຍອມຊໍາລະຄ່າປັບໃໝ, ຄ່າທໍານຽມ ຫຼືຄ່າພັນທະອື່ນໆ ຕາມເວລາທີ່ໄດ້ກໍານົດໄວ້ແລ້ວ ຈະຖືກປະຕິບັດມາດຕະການເພີ່ມ ດັ່ງນີ້ :

- ຈະຖືກຕັກເຕືອນ ສໍາລັບການແຈ້ງເຕືອນຄັ້ງທີໜຶ່ງ;

- ຈະຖືກປັບໃໝເທົ່າຕົວຂອງມູນຄ່າການປັບໃໝ, ຄ່າທໍານຽມ ຫຼືມູນຄ່າພັນທະອື່ນໆ ສໍາລັບການແຈ້ງເຕືອນຄັ້ງທີສອງ;

- ຈະຖືກປະຕິບັດມາດຕະການໃດໜຶ່ງ ເຊັ່ນ ຍຶດ, ອາຍັດສິນຄ້າ, ເຄື່ອງຂອງທີ່ກ່ຽວຂ້ອງ, ໂຈະການດໍາເນີນທຸລະກິດຢ່າງໃດຢ່າງໜຶ່ງໄວ້ຊົ່ວຄາວ ຫຼືຖາວອນ ຕາມແຕ່ລະກໍລະນີ ສໍາລັບການແຈ້ງເຕືອນຄັ້ງທີສາມ.

ໝວດທີ 5
ການຈັດຕັ້ງປະຕິບັດ

ມາດຕາ 14. ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ, ກົມຈັດຕັ້ງ ແລະ ພະນັກງານ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ເປັນເຈົ້າການ ແລະປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນ ຈັດຕັ້ງປະຕິບັດຂໍ້ຕົກລົງສະ ບັບນີ້ໃຫ້ມີປະສິດທິຜົນ.

ມາດຕາ 15. ພາກສ່ວນທີ່ກ່ຽວຂ້ອງ, ຫ້ອງການ, ສະຖາບັນ, ບັນດາກົມອ້ອມຂ້າງກະຊວງອຸດສາຫະກຳ ແລະ ການຄ້າ, ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ຂອງຕົນ.

ມາດຕາ 16. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ.

ດຣ. ນາມ ວິຍະເກດ